# ສະບາຍດີປີໃໝ່
# ຄ.ສ 2014



ປະຕິທິນລາວ ພ.ສ 2557
ຈ.ສ 1376, ປີມະເມຍ(ປີມ້າ)













## ຄຸ້ມຄອງ ແລະ ພັດທະນາທີ່ດິນ

ທິດທາງ:

ສົ່ງເສີມການນຳໃຊ້ໄປພ້ອມໆກັບ ການປົກປັກຮັກສາ ທີ່ດິນ ແລະ ຊັບພະຍາກອນທຳມະຊາດໃຫ້ຍືນຍົງ, ຮັບປະກັນສິດທິພາບ ທີ່ຍາວນານ ແລະ ໝາກຜົນຂອງໜ້າດິນ, ພື້ນດິນໃນລະດັບສູງ ບໍ່ໃຫ້ມີຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ; ເຮັດໃຫ້ພົນລະເມືອງລາວມີສິດນຳໃຊ້ທີ່ດິນ ເພື່ອດຳລົງຊີວິດ, ສ້າງທີ່ຢູ່ອາໃສ ແລະ ທຳການຜະລິດ ຕາມກົດໝາຍ, ກຳນົດຢ່າງເປັນເອກະພາບ, ຫັນທີ່ດິນໃຫ້ເປັນທຶນ, ເປັນແຫຼ່ງສ້າງຄວາມຮັ່ງມີໃຫ້ປະຊາຊົນ ແລະ ປະເທດຊາດ ທັງຮັບປະກັນສິດຄຸ້ມຄອງລວມສູນ ແລະ ກຳມະສິດຂອງລັດ, ຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ການສ້າງຮັ່ງຄູນມີຈາກທີ່ດິນ ທີ່ລະເມີດກົດໝາຍ.

(ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VII, 2011-2015)


ກຊສ MONRE
LIWG Land Issues Working Group
Village Focus International
CIDSE
JVC Japan International Volunteer Center
OXFAM
Mennonite Central Committee
welt hunger hilfe
World Renew
care
GAPE
CCL
LUX DEV Luxembourg Agency for Development Cooperation
Mekong Watch
HELVETAS Swiss Intercooperation LAOS
PADETC
AFC Agro-Forestry Consultant
caritas Luxembourg
Swiss Agency for Development and Cooperation SDC
german cooperation
giz
British Embassy Vientiane

# ການສະໜອງຂໍ້ມູນຂ່າວສານກ່ຽວກັບໂຄງການພັດທະນາ




## 1. ການເຜີຍແຜ່ຂໍ້ມູນ:

ຜູ້ພັດທະນາໂຄງການ ຕ້ອງແຈ້ງຂໍ້ມູນຂ່າວສານ ກ່ຽວກັບແຜນພັດທະນາໂຄງການລົງທຶນ, ຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ຈະເກີດຈາກໂຄງການລົງທຶນ ໃຫ້ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ຊາບລວມທັງຂໍ້ມູນກ່ຽວກັບບົດລາຍງານ ສສຕ ຫຼື ບົດລາຍງານ ປຜສດ ຜຄສລ, ຜຄສດ. ຈຸດປະສົງຂອງການເຜີຍແຜ່ຂໍ້ມູນແມ່ນເພື່ອນຳສະເໜີຂໍ້ມູນໃຫ້ແກ່ປະຊາຊົນໃນເຂດທ້ອງຖິ່ນໂດຍສະເພາະບ້ານທີ່ມີໂຄງການຕັ້ງຢູ່ ແລະ ຜູ້ມີສ່ວນຮ່ວມອື່ນໆ ຂໍ້ມູນກ່ຽວກັບຄວາມຄືບໜ້າຂອງໂຄງການໃນແຕ່ລະໄລຍະ.

**( ພາກທີ IV. ບົດແນະນຳ ວ່າດ້ວຍ ການມີສ່ວນຮ່ວມໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ ເລກທີ 707/ກຊສ ນະຄອນຫລວງວຽງຈັນ, ວັນທີ 05 ກຸມພາ 2013 )**

**ມາດຕາ 6:** ລັດປົກປ້ອງສິດອິດສະລະພາບ ແລະ ສິດປະຊາທິປະໄຕຂອງປະຊາຊົນ ທີ່ບໍ່ມີໃຜຈະລ່ວງລະເມີດໄດ້. ທຸກອົງການ ແລະ ພະນັກງານຂອງລັດຕ້ອງໂຄສະນາອົບຮົມ ບັນດານະໂຍບາຍ ແລະ ລະບຽບກົດໝາຍ ໃຫ້ປະຊາຊົນ ແລະ ພ້ອມກັນຈັດຕັ້ງປະຕິບັດ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ. ຫ້າມທຸກການກະທຳແບບອາດຍາສິດ, ຂົ່ມຂູ່ອັນຈະກໍ່ຄວາມເສຍຫາຍເຖິງກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສິນບັດຂອງປະຊາຊົນ.

**( ລັດຖະທຳມະນູນແຫ່ງ ສປປ ລາວ, ເລກທີ 25/ສພຊ, ລົງວັນທີ 06 ພຶດສະພາ 2003 )**

## 01 ມັງກອນ January — ພສ ໒໕໕໗ ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | 1 ຂ.1 ດ.2 | 2 ຂ.2 ດ.2 | 3 ຂ.3 ດ.2 | 4 ຂ.4 ດ.2 |
| 5 ຂ.5 ດ.2 | 6 ຂ.6 ດ.2 | 7 ຂ.7 ດ.2 | 8 ຂ.8 ດ.2 | 9 ຂ.9 ດ.2 | 10 ຂ.10 ດ.2 | 11 ຂ.11 ດ.2 |
| 12 ຂ.12 ດ.2 | 13 ຂ.13 ດ.2 | 14 ຂ.14 ດ.2 | 15 ຂ.15 ດ.2 | 16 ຮ.1 ດ.2 | 17 ຮ.2 ດ.2 | 18 ຮ.3 ດ.2 |
| 19 ຮ.4 ດ.2 | 20 ຮ.5 ດ.2 | 21 ຮ.6 ດ.2 | 22 ຮ.7 ດ.2 | 23 ຮ.8 ດ.2 | 24 ຮ.9 ດ.2 | 25 ຮ.10 ດ.2 |
| 26 ຮ.11 ດ.2 | 27 ຮ.12 ດ.2 | 28 ຮ.13 ດ.2 | 29 ຮ.14 ດ.2 | 30 ຮ.15 ດ.2 | 31 ຂ.1 ດ.3 | |

1. ປີໃໝ່ສາກົນ.
20. ວັນສ້າງຕັ້ງກອງທັບປະຊາຊົນລາວ.

## 02 ກຸມພາ Fabuary — ພສ ໒໕໕໗ ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | | 1 ຂ.2 ດ.3 |
| 2 ຂ.3 ດ.3 | 3 ຂ.4 ດ.3 | 4 ຂ.5 ດ.3 | 5 ຂ.6 ດ.3 | 6 ຂ.7 ດ.3 | 7 ຂ.8 ດ.3 | 8 ຂ.9 ດ.3 |
| 9 ຂ.10 ດ.3 | 10 ຂ.11 ດ.3 | 11 ຂ.12 ດ.3 | 12 ຂ.13 ດ.3 | 13 ຂ.14 ດ.3 | 14 ຂ.15 ດ.3 | 15 ຮ.1 ດ.3 |
| 16 ຮ.2 ດ.3 | 17 ຮ.3 ດ.3 | 18 ຮ.4 ດ.3 | 19 ຮ.5 ດ.3 | 20 ຮ.6 ດ.3 | 21 ຮ.7 ດ.3 | 22 ຮ.8 ດ.3 |
| 23 ຮ.9 ດ.3 | 24 ຮ.10 ດ.3 | 25 ຮ.11 ດ.3 | 26 ຮ.12 ດ.3 | 27 ຮ.13 ດ.3 | 28 ຮ.14 ດ.3 | |

1. ວັນສ້າງຕັ້ງສະຫະພັນກຳມະບານລາວ.
14. ວັນບຸນມາຄະບູຊາ, ບຸນນະມັດສະການ ພະທາດສີໂຄດຕະບອງ, ບຸນວັດພູຈຳປາສັກ.


MONRE · LIWG Land Issues Working Group · Village Focus International · CIDSE · JVC · OXFAM · Mennonite Central Committee · welt hunger hilfe · World Renew · care · GAPE · CCL · LuxDev Luxembourg Agency for Development Cooperation
Mekong Watch · HELVETAS · PADETC · AFC Agro-Forestry Consultant · caritas Luxembourg · Swiss Agency for Development and Cooperation SDC · german cooperation · giz · British Embassy Vientiane · Ambassade de France

# ຄວາມຮູ້ພື້ນຖານກ່ຽວກັບການເຮັດສັນຍາ




**<u>ມາດຕາ 10:</u> ເງື່ອນໄຂຂອງສັນຍາ**

ສັນຍາຕ້ອງເຮັດຂຶ້ນໃຫ້ຄົບຖ້ວນຕາມເງື່ອນໄຂດັ່ງນີ້:

1. ຄວາມສະໝັກໃຈຂອງຄູ່ສັນຍາ;
2. ຄວາມສາມາດທາງດ້ານການປະພຶດຂອງຄູ່ສັນຍາ;
3. ວັດຖຸປະສົງຂອງສັນຍາ ຕ້ອງໃຫ້ຊັດເຈນ, ມີຈິງ ແລະ ຖືກຕ້ອງຕາມກົດໝາຍ;
4. ເຫດຜົນຂອງສັນຍາ ຕ້ອງໃຫ້ຖືກຕ້ອງຕາມກົດໝາຍ;
5. ຮູບການຂອງສັນຍາ ຕ້ອງໃຫ້ສອດຄ່ອງກັບການກຳນົດຂອງກົດໝາຍ.

**<u>ມາດຕາ 11:</u> ຄວາມສະໝັກໃຈຂອງຄູ່ສັນຍາ**

ຄວາມສະໝັກໃຈຂອງຄູ່ສັນຍາ ແມ່ນຄວາມສົມຍອມຂອງຄູ່ສັນຍາ ໃນການເຮັດສັນຍານຳກັນ ໂດຍປາສະຈາກຄວາມຫຼົງຜິດ, ການຕົວະຍົວະຫຼອກລວງ, ການບັງຄັບນາບຂູ່ ຫຼື ການໃຊ້ຄວາມຮຸນແຮງ ຫຼື ຄວາມອັບປະໂຫຍດຂອງຝ່າຍໃດໜຶ່ງ (ວັກ 1).

**<u>ມາດຕາ 12:</u> ຄວາມສາມາດທາງດ້ານການປະພຶດຂອງຄູ່ສັນຍາ**

ບຸກຄົນໃດໜຶ່ງ ຈະຖືວ່າເປັນຜູ້ມີຄວາມສາມາດທາງດ້ານການປະພຶດໄດ້ ກໍ່ຕໍ່ເມື່ອບຸກຄົນນັ້ນ ຫາກມີອາຍຸແຕ່ສິບແປດປີຂຶ້ນໄປ ແລະ ບໍ່ເປັນຄົນບ້າເສຍຈິດ (ວັກ 2).

**<u>ມາດຕາ 13:</u> ວັດຖຸປະສົງຂອງສັນຍາ**

ວັດຖຸປະສົງຂອງສັນຍາ ແມ່ນເປົ້າໝາຍທີ່ຄູ່ສັນຍາຕ້ອງການໃຫ້ມີຂຶ້ນ (ວັກ 1).

**<u>ມາດຕາ 14:</u> ເຫດຜົນຂອງສັນຍາ**

ເຫດຜົນຂອງສັນຍາ ແມ່ນສິ່ງຊຸກຍູ້ໃຫ້ເຮັດສັນຍາ ແລະ ໃຫ້ຄູ່ສັນຍານັ້ນໄດ້ປະຕິບັດສິດ ແລະ ພັນທະຂອງຕົນ (ວັກ 1).

**<u>ມາດຕາ 15:</u> ຮູບການຂອງສັນຍາ**

ສັນຍາທີ່ເຮັດເປັນລາຍລັກອັກສອນນັ້ນ ຕ້ອງລົງວັນທີ ເດືອນ ປີ ແລະ ມີລາຍເຊັນຂອງຄູ່ສັນຍາ. ເພື່ອຢັ້ງຢືນຄວາມແນ່ນອນ ຄູ່ສັນຍາອາດຈະແປະໂປ້ມືຂອງຕົນໃສ່ຕື່ມອີກກໍ່ໄດ້ (ວັກ 3).

ເພື່ອຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ ແລະ ຄວາມເປັນຈິງຂອງສັນຍາ ໃຫ້ນຳສັນຍານັ້ນ ໄປຢັ້ງຢືນຢູ່ສຳນັກງານທະບຽນສານ (ວັກ 5).

**( ກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ເລກທີ 01/ສພຊ, ວັນທີ 8/12/2008 ).**

## 03 ມີນາ March — ພສ ໒໕໕໗ — ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | | 1 ຂ.1 ດ.4 |
| 2 ຂ.2 ດ.4 | 3 ຂ.3 ດ.4 | 4 ຂ.4 ດ.4 | 5 ຂ.5 ດ.4 | 6 ຂ.6 ດ.4 | 7 ຂ.7 ດ.4 | 8 ຂ.8 ດ.4 |
| 9 ຂ.9 ດ.4 | 10 ຂ.10 ດ.4 | 11 ຂ.11 ດ.4 | 12 ຂ.12 ດ.4 | 13 ຂ.13 ດ.4 | 14 ຂ.14 ດ.4 | 15 ຂ.15 ດ.4 |
| 16 ຮ.1 ດ.4 | 17 ຮ.2 ດ.4 | 18 ຮ.3 ດ.4 | 19 ຮ.4 ດ.4 | 20 ຮ.5 ດ.4 | 21 ຮ.6 ດ.4 | 22 ຮ.7 ດ.4 |
| 23 ຮ.8 ດ.4 | 24 ຮ.9 ດ.4 | 25 ຮ.10 ດ.4 | 26 ຮ.11 ດ.4 | 27 ຮ.12 ດ.4 | 28 ຮ.13 ດ.4 | 29 ຮ.14 ດ.4 |
| 30 ຮ.15 ດ.4 | 31 ຂ.1 ດ.5 | | | | | |

8. ວັນແມ່ຍິງສາກົນ.
22. ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ.

## 04 ເມສາ April — ພສ ໒໕໕໘ — ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | 1 ຂ.2 ດ.5 | 2 ຂ.3 ດ.5 | 3 ຂ.4 ດ.5 | 4 ຂ.5 ດ.5 | 5 ຂ.6 ດ.5 |
| 6 ຂ.7 ດ.5 | 7 ຂ.8 ດ.5 | 8 ຂ.9 ດ.5 | 9 ຂ.10 ດ.5 | 10 ຂ.11 ດ.5 | 11 ຂ.12 ດ.5 | 12 ຂ.13 ດ.5 |
| 13 ຂ.14 ດ.5 | 14 ຂ.15 ດ.5 | 15 ຮ.1 ດ.5 | 16 ຮ.2 ດ.5 | 17 ຮ.3 ດ.5 | 18 ຮ.4 ດ.5 | 19 ຮ.5 ດ.5 |
| 20 ຮ.6 ດ.5 | 21 ຮ.7 ດ.5 | 22 ຮ.8 ດ.5 | 23 ຮ.9 ດ.5 | 24 ຮ.10 ດ.5 | 25 ຮ.11 ດ.5 | 26 ຮ.12 ດ.5 |
| 27 ຮ.13 ດ.5 | 28 ຮ.14 ດ.5 | 29 ຂ.1 ດ.6 | 30 ຂ.2 ດ.6 | | | |

14. ວັນສັງຂານລ່ວງ. ວັນສ້າງຕັ້ງຊາວໜຸ່ມ ສປປ ລາວ.
15. ວັນເນົາ.
16. ວັນສັງຂານຂຶ້ນປີໃໝ່ລາວ.

ກຊສ MONRE · LIWG Land Issues Working Group · Village Focus International · CIDSE · JVC Japan International Volunteer Center · OXFAM · Mennonite Central Committee · welt hunger hilfe · World Renew · care · CCL · LUX DEV · Mekong Watch · HELVETAS Swiss Intercooperation · PADETC · AFC Agro-Forestry Consultant · caritas Luxembourg · Swiss Agency for Development and Cooperation SDC · german cooperation · giz · British Embassy Vientiane

# ຄວາມສຳຄັນຂອງໜ່ວຍງານໄກ່ເກ່ຍຂັ້ນບ້ານ




## ໝວດທີ I ຂໍ້ກຳນົດລວມກ່ຽວກັບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

### ມາດຕາ 1: ຈຸດປະສົງການສ້າງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ການສ້າງຕັ້ງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນແນໃສ່ເຮັດໃຫ້ຮາກຖານບ້ານມີລະບົບການຈັດຕັ້ງຍຸຕິທຳເພື່ອຊ່ວຍແກ້ໄຂຂໍ້ຂັດແຍ່ງຕ່າງໆທີ່ເກີດຂຶ້ນພາຍໃນບ້ານ ດ້ວຍການປະນີປະນອມ ໂດຍສັນຕິວິທີ, ເຮັດໜ້າທີ່ຊ່ວຍອົງການປົກຄອງບ້ານໃນການສຶກສາອົບຮົມປະຊາຊົນເພື່ອສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ, ກົດລະບຽບຂອງບ້ານ, ຮັບປະກັນຄວາມສະເໝີພາບບົນພື້ນຖານລະບຽບກົດໝາຍ. ປົກປ້ອງ ແລະ ເສີມຂະຫຍາຍຄວາມສາມັກຄີປອງດອງພາຍໃນຄອບຄົວ ແລະ ປະຊາຊົນບັນດາເຜົ່າພາຍໃນບ້ານ, ປະກອບສ່ວນສ້າງບ້ານໃຫ້ເປັນບ້ານພັດທະນາຢ່າງຮອບດ້ານ.

## ໝວດທີ II ທີ່ຕັ້ງ ແລະ ພາລະບົດບາດ

### ມາດຕາ 5: ພາລະບົດບາດຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

4. ປະສານສົມທົບກັບບັນດາອົງການທີ່ເຄື່ອນໄຫວວຽກງານຍຸຕິທຳ ແລະ ອົງການອື່ນໆ ທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນພາຍໃນບ້ານ.

( ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ເລກທີ 210/ກຍ, ວັນທີ 19 ຕຸລາ 2009 ).

**05 ພຶດສະພາ May** — ພສ ໒໕໕໗ / ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | 1 ຂ.3 ດ.6 | 2 ຂ.4 ດ.6 | 3 ຂ.5 ດ.6 |
| 4 ຂ.6 ດ.6 | 5 ຂ.7 ດ.6 | 6 ຂ.8 ດ.6 | 7 ຂ.9 ດ.6 | 8 ຂ.10 ດ.6 | 9 ຂ.11 ດ.6 | 10 ຂ.12 ດ.6 |
| 11 ຂ.13 ດ.6 | 12 ຂ.14 ດ.6 | 13 ຂ.15 ດ.6 | 14 ຮ.1 ດ.6 | 15 ຮ.2 ດ.6 | 16 ຮ.3 ດ.6 | 17 ຮ.4 ດ.6 |
| 18 ຮ.5 ດ.6 | 19 ຮ.6 ດ.6 | 20 ຮ.7 ດ.6 | 21 ຮ.8 ດ.6 | 22 ຮ.9 ດ.6 | 23 ຮ.10 ດ.6 | 24 ຮ.11 ດ.6 |
| 25 ຮ.12 ດ.6 | 26 ຮ.13 ດ.6 | 27 ຮ.14 ດ.6 | 28 ຮ.15 ດ.6 | 29 ຂ.1 ດ.7 | 30 ຂ.2 ດ.7 | 31 ຂ.3 ດ.7 |

1. ວັນກຳມະກອນສາກົນ.
13. ວັນບຸນວິສາຂະບູຊາ.

**06 ມິຖຸນາ June** — ພສ ໒໕໕໗ / ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| 1 ຂ.4 ດ.7 | 2 ຂ.5 ດ.7 | 3 ຂ.6 ດ.7 | 4 ຂ.7 ດ.7 | 5 ຂ.8 ດ.7 | 6 ຂ.9 ດ.7 | 7 ຂ.10 ດ.7 |
| 8 ຂ.11 ດ.7 | 9 ຂ.12 ດ.7 | 10 ຂ.13 ດ.7 | 11 ຂ.14 ດ.7 | 12 ຂ.15 ດ.7 | 13 ຮ.1 ດ.7 | 14 ຮ.2 ດ.7 |
| 15 ຮ.3 ດ.7 | 16 ຮ.4 ດ.7 | 17 ຮ.5 ດ.7 | 18 ຮ.6 ດ.7 | 19 ຮ.7 ດ.7 | 20 ຮ.8 ດ.7 | 21 ຮ.9 ດ.7 |
| 22 ຮ.10 ດ.7 | 23 ຮ.11 ດ.7 | 24 ຮ.12 ດ.7 | 25 ຮ.13 ດ.7 | 26 ຮ.14 ດ.7 | 27 ຂ.1 ດ.8 | 28 ຂ.2 ດ.8 |
| 29 ຂ.3 ດ.8 | 30 ຂ.4 ດ.8 | | | | | |

1. ວັນເດັກນ້ອຍສາກົນ, ວັນປູກຕົ້ນໄມ້ແຫ່ງຊາດ.

# ເນື້ອໃນ ແລະ ເງື່ອນໄຂຂອງຄຳຮ້ອງທຸກ




## ມາດຕາ 12: ເນື້ອໃນຂອງຄຳຮ້ອງທຸກ

ຄຳຮ້ອງທຸກທີ່ເປັນລາຍລັກອັກສອນ ຕ້ອງມີເນື້ອໃນຕົ້ນຕໍດັ່ງນີ້:

1. ຊື່ ແລະ ສະຖານທີ່ຂອງການຈັດຕັ້ງທີ່ກ່ຽວຂ້ອງ;
2. ຊື່, ນາມສະກຸນ, ອາຍຸ, ອາຊີບ, ທີ່ຢູ່ຂອງຜູ້ຮ້ອງທຸກ ແລະ ຜູ້ຖືກຮ້ອງທຸກ;
3. ບັນຫາທີ່ຢາກໃຫ້ແກ້ໄຂ, ຫຼັກຖານອ້າງອີງ;
4. ສະຖານທີ່, ວັນທີ, ລາຍເຊັນ ແລະ ລາຍໂປ້ມືຂອງຜູ້ຮ້ອງທຸກ ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ.
   ໃນກໍລະນີ ຜູ້ຮ້ອງທຸກໄປລາຍງານ ຫຼື ແຈ້ງຄວາມໂດຍປາກເປົ່າ ຕໍ່ການຈັດຕັ້ງທີ່ກ່ຽວຂ້ອງນັ້ນ ຜູ້ຮັບການລາຍງານ ຫຼື ຮັບແຈ້ງຄວາມຕ້ອງເຮັດບົດບັນທຶກ ເປັນລາຍລັກອັກສອນ ຕາມເນື້ອໃນ ທີ່ໄດ້ກ່າວໄວ້ ໃນວັກເທິງຂອງມາດຕານີ້.

## ມາດຕາ 13: ເງື່ອນໄຂຮັບຄຳຮ້ອງທຸກ

ຄຳຮ້ອງທຸກຈະຮັບມາພິຈາລະນາໄດ້ ກໍ່ຕໍ່ເມື່ອມີເງື່ອນໄຂດັ່ງນີ້:

1. ຕ້ອງມີຊື່, ທີ່ຢູ່, ລາຍເຊັນ ແລະ ລາຍໂປ້ມື ຂອງຜູ້ຮ້ອງທຸກເອງ ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ;
2. ຜູ້ຮ້ອງທຸກຕ້ອງມີອາຍຸແຕ່ 18 ປີ ຂຶ້ນໄປ ແລະ ບໍ່ເປັນບ້າເສຍຈິດ;
3. ຄຳຮ້ອງທຸກ ທີ່ຍັງບໍ່ທັນມີການຈັດຕັ້ງໃດພິຈາລະນາແກ້ໄຂເທື່ອ ຫຼື ແກ້ໄຂແລ້ວ ແຕ່ຜູ້ຮ້ອງທຸກຍັງບໍ່ພໍໃຈ;
4. ຄຳຮ້ອງທຸກທີ່ເປັນຄຳຮ້ອງຂໍຄວາມເປັນທຳນັ້ນ ຕ້ອງໄດ້ຜ່ານການແກ້ໄຂທາງດ້ານບໍລິຫານລັດສິ້ນສຸດເສຍກ່ອນ ຫຼື ຖ້າເປັນຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວກໍ່ຕ້ອງມີຫຼັກຖານໃໝ່;
5. ຄຳຮ້ອງທຸກຕ້ອງເຮັດເປັນພາສາລາວ ທີ່ສາມາດອ່ານແລະເຂົ້າໃຈເນື້ອໃນໄດ້.

**( ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ເລກທີ07/ສພຊ ວັນທີ 9 ພະຈິກ 2005 ).**

ທ່ານສາມາດສະເໜີຂໍ້ມູນ ຫຼື ບັນຫາກ່ຽວກັບທີ່ດິນຜ່ານສາຍດ່ວນຂອງສະພາແຫ່ງຊາດ ທີ່ເປີດສາຍໃນໄລຍະທີ່ມີກອງປະຊຸມສະໄໝສາມັນທີ່ເບີ 156 ( ບໍ່ເສຍຄ່າໂທ), ຫຼື ແຟກ: 021 452 627 ນອກຈາກນັ້ນທ່ານຍັງສາມາດຍື່ນຄຳຮ້ອງທຸກໄດ້ເວລາ ຕາມໂມງລັດຖະການ ທີ່ຕູ້ໄປສະນີ: 662.
ອີເມວ: na_sess...@na.gov.la

## 07 ກໍລະກົດ July — ພສ ໒໕໕໗ ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | 1 ຂ.5 ດ.8 | 2 ຂ.6 ດ.8 | 3 ຂ.7 ດ.8 | 4 ຂ.8 ດ.8 | 5 ຂ.9 ດ.8 |
| 6 ຂ.10 ດ.8 | 7 ຂ.11 ດ.8 | 8 ຂ.12 ດ.8 | 9 ຂ.13 ດ.8 | 10 ຂ.14 ດ.8 | 11 ຂ.15 ດ.8 | 12 ຮ.1 ດ.8 |
| 13 ຮ.2 ດ.8 | 14 ຮ.3 ດ.8 | 15 ຮ.4 ດ.8 | 16 ຮ.5 ດ.8 | 17 ຮ.6 ດ.8 | 18 ຮ.7 ດ.8 | 19 ຮ.8 ດ.8 |
| 20 ຮ.9 ດ.8 | 21 ຮ.10 ດ.8 | 22 ຮ.11 ດ.8 | 23 ຮ.12 ດ.8 | 24 ຮ.13 ດ.8 | 25 ຮ.14 ດ.8 | 26 ຮ.15 ດ.8 |
| 27 ຂ.1 ດ.9 | 28 ຂ.2 ດ.9 | 29 ຂ.3 ດ.9 | 30 ຂ.4 ດ.9 | 31 ຂ.5 ດ.9 | | |

11. ວັນບຸນເຂົ້າພັນສາ.
13. ວັນຄ້າຍວັນເກີດ ທ່ານ ປະທານ ສຸພານຸວົງ.
20. ວັນສ້າງຕັ້ງສະຫະພັນແມ່ຍິງລາວ.

## 08 ສິງຫາ August — ພສ ໒໕໕໗ ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | 1 ຂ.6 ດ.9 | 2 ຂ.7 ດ.9 |
| 3 ຂ.8 ດ.9 | 4 ຂ.9 ດ.9 | 5 ຂ.10 ດ.9 | 6 ຂ.11 ດ.9 | 7 ຂ.12 ດ.9 | 8 ຂ.13 ດ.9 | 9 ຂ.14 ດ.9 |
| 10 ຂ.15 ດ.9 | 11 ຮ.1 ດ.9 | 12 ຮ.2 ດ.9 | 13 ຮ.3 ດ.9 | 14 ຮ.4 ດ.9 | 15 ຮ.5 ດ.9 | 16 ຮ.6 ດ.9 |
| 17 ຮ.7 ດ.9 | 18 ຮ.8 ດ.9 | 19 ຮ.9 ດ.9 | 20 ຮ.10 ດ.9 | 21 ຮ.11 ດ.9 | 22 ຮ.12 ດ.9 | 23 ຮ.13 ດ.9 |
| 24 ຮ.14 ດ.9 | 25 ຂ.1 ດ.10 | 26 ຂ.2 ດ.10 | 27 ຂ.3 ດ.10 | 28 ຂ.4 ດ.10 | 29 ຂ.5 ດ.10 | 30 ຂ.6 ດ.10 |
| 31 ຂ.7 ດ.10 | | | | | | |

15. ວັນລັດຖະທຳມະນູນແຫ່ງຊາດ.
23. ວັນຍຶດອຳນາດ.
24. ວັນບຸນຫໍ່ເຂົ້າປະດັບດິນ.

# ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ກ່ຽວກັບທີ່ດິນ




**ມາດຕາ 17: ສິດສະເໝີພາບທາງດ້ານຄອບຄົວ**

ລັດ ແລະ ສັງຄົມສົ່ງເສີມ ແລະ ປົກປ້ອງຄວາມສະເໝີພາບຍິງ-ຊາຍ ພາຍໃນຄອບຄົວ (ວັກ 1).
ຍິງ ແລະ ຊາຍມີສິດເທົ່າທຽມກັນໃນທຸກດ້ານ ກ່ຽວກັບສາຍພົວພັນຄອບຄົວ (ວັກ 2).
ເມຍມີສິດເທົ່າທຽມກັນກັບຜົວ ກ່ຽວກັບສິນສົມສາງ (ວັກ 5).

**(ກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ເລກທີ08/ສພຊ, ລົງວັນທີ 22/10/2004).**

•ຂໍ້ 3: ຫຼັກການຈັດຕັ້ງປະຕິບັດ: ຂໍ້3, ຄວາມເປັນທຳ ແລະ ຄວາມຍຸດຕິທຳ: ໂດຍຮັບຮູ້ວ່າຄວາມສະເໝີພາບລະຫວ່າງບຸກຄົນອາດຮຽກຮ້ອງໃຫ້ຮັບຮູ້ເຖິງຄວາມແຕກຕ່າງລະຫວ່າງບຸກຄົນ ແລະ ໃຫ້ດຳເນີນການໃນທາງບວກ, ລວມທັງການໃຫ້ອຳນາດ, ເພື່ອສົ່ງເສີມສິດຄອບຄອງນຳໃຊ້ທີ່ເປັນທຳ ແລະ ການເຂົ້າເຖິງທີ່ດິນ, ການປະມົງ ແລະ ປ່າໄມ້, ສຳລັບທຸກຄົນລວມທັງແມ່ຍິງ ແລະ ຜູ້ຊາຍ, ຄົນໄວໜຸ່ມ ແລະ ກຸ່ມຄົນທີ່ອ່ອນແອ ແລະ ດ້ອຍໂອກາດໂດຍຮີດຄອງປະເພນີ, ຕາມເງື່ອນໄຂຂອງປະເທດ

•ຂໍ້ 4: ຄວາມສະເໝີພາບຍິງ-ຊາຍ: ຮັບປະກັນສິດສະເໝີພາບຂອງແມ່ຍິງ ແລະ ຜູ້ຊາຍໃນການຊົມໃຊ້ສິດທິມະນຸດ, ໄປພ້ອມໆກັບການຮັບຮູ້ເຖິງຄວາມແຕກຕ່າງລະຫວ່າງແມ່ຍິງ ແລະ ຜູ້ຊາຍ ແລະ ນຳໃຊ້ມາດຕະການສະເພາະທີ່ແນໃສ່ເພື່ອຊຸກຍູ້ຄວາມສະເໝີພາບຢ່າງແທ້ຈິງເມື່ອຈຳເປັນ. ລັດຄວນຮັບປະກັນວ່າໃຫ້ແມ່ຍິງ ແລະ ເດັກຍິງມີສິດຄອບຄອງນຳໃຊ້ ແລະ ເຂົ້າເຖິງທີ່ດິນ, ການປະມົງ ແລະ ປ່າໄມ້ຢ່າງສະເໝີພາບໂດຍບໍ່ຂຶ້ນກັບສະຖານະທາງພົນລະເມືອງ ແລະ ສະຖານະການແຕ່ງງານຂອງເຂົາເຈົ້າ.

**(ກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ເລກທີ08/ສພຊ, ລົງວັນທີ 22/10/2004).**

**ພາກທີ III, ມາດຕາ 14 (CEDAW)**

ຂໍ້ (ຊ). ສິດໄດ້ຮັບສິນເຊື່ອ ແລະ ເງິນກູ້ສຳລັບກະສິກຳ, ສິ່ງອຳນວຍຄວາມສະດວກດ້ານການຕະຫຼາດ, ເຕັກໂນໂລຊີ ທີ່ເໝາະສົມ ແລະ ປະຕິບັດເທົ່າທຽມກັນ ໃນການປະຕິຮູບທີ່ດິນ ແລະ ການກະເສດ, ລວມທັງໂຄງການຈັດສັນທີ່ຢູ່ທຳກິນຄືນໃໝ່.

**(ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ພະຈິກ 2011)**

## 09 ກັນຍາ September — ພສ ໒໕໕໗ ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | 1 ຂ.8 ດ.10 | 2 ຂ.9 ດ.10 | 3 ຂ.10 ດ.10 | 4 ຂ.11 ດ.10 | 5 ຂ.12 ດ.10 | 6 ຂ.13 ດ.10 |
| 7 ຂ.14 ດ.10 | 8 ຂ.15 ດ.10 | 9 ຮ.1 ດ.10 | 10 ຮ.2 ດ.10 | 11 ຮ.3 ດ.10 | 12 ຮ.4 ດ.10 | 13 ຮ.5 ດ.10 |
| 14 ຮ.6 ດ.10 | 15 ຮ.7 ດ.10 | 16 ຮ.8 ດ.10 | 17 ຮ.9 ດ.10 | 18 ຮ.10 ດ.10 | 19 ຮ.11 ດ.10 | 20 ຮ.12 ດ.10 |
| 21 ຮ.13 ດ.10 | 22 ຮ.14 ດ.10 | 23 ຮ.15 ດ.10 | 24 ຂ.1 ດ.11 | 25 ຂ.2 ດ.11 | 26 ຂ.3 ດ.11 | 27 ຂ.4 ດ.11 |
| 28 ຂ.5 ດ.11 | 29 ຂ.6 ດ.11 | 30 ຂ.7 ດ.11 | | | | |

8. ວັນບຸນຫໍ່ເຂົ້າສະຫລາກ.

## 10 ຕຸລາ Ocpober — ພສ ໒໕໕໗ ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | 1 ຂ.8 ດ.11 | 2 ຂ.9 ດ.11 | 3 ຂ.10 ດ.11 | 4 ຂ.11 ດ.11 |
| 5 ຂ.12 ດ.11 | 6 ຂ.13 ດ.11 | 7 ຂ.14 ດ.11 | 8 ຂ.15 ດ.11 | 9 ຮ.1 ດ.11 | 10 ຮ.2 ດ.11 | 11 ຮ.3 ດ.11 |
| 12 ຮ.4 ດ.11 | 13 ຮ.5 ດ.11 | 14 ຮ.6 ດ.11 | 15 ຮ.7 ດ.11 | 16 ຮ.8 ດ.11 | 17 ຮ.9 ດ.11 | 18 ຮ.10 ດ.11 |
| 19 ຮ.11 ດ.11 | 20 ຮ.12 ດ.11 | 21 ຮ.13 ດ.11 | 22 ຮ.14 ດ.11 | 23 ຂ.1 ດ.12 | 24 ຂ.2 ດ.12 | 25 ຂ.3 ດ.12 |
| 26 ຂ.4 ດ.12 | 27 ຂ.5 ດ.12 | 28 ຂ.6 ດ.12 | 29 ຂ.7 ດ.12 | 30 ຂ.8 ດ.12 | 31 ຂ.9 ດ.12 | |

7. ວັນຄູແຫ່ງຊາດ.
8. ວັນບຸນອອກພັນສາ.
9. ວັນບຸນຊ່ວງເຮືອນະຄອນຫລວງວຽງຈັນ.
12. ວັນປະກາດເອກະລາດ.

# ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ




## ມາດຕາ 8: ການຟື້ນຟູສະພາບເສດຖະກິດ

ສຳລັບຜູ້ທີ່ຖືກຍົກຍ້າຍ ຊຶ່ງການດຳລົງຊີວິດຂອງເຂົາເຈົ້າ ຜ່ານມາ ແມ່ນອາໃສແຕ່ການນຳໃຊ້ທີ່ດິນ ທີ່ໄດ້ຮັບຜົນກະທົບຈາກໂຄງການນັ້ນ, ເຂົາເຈົ້າຕ້ອງໄດ້ຮັບການທົດແທນ ດ້ວຍທີ່ດິນເປັນຕົ້ນຕໍ, ຖ້າບໍ່ມີທີ່ດິນສະໜອງໃຫ້ພວກກ່ຽວ ຕ້ອງມີການສ້າງໂອກາດໃຫ້ມີວຽກເຮັດງານທຳ ຫຼື ການເຮັດວຽກທຸລະກິດແບບເປັນຂອງຕົນເອງ (ວັກ 2).

## ມາດຕາ 9: ການຟື້ນຟູ ແລະ ການສ້ອມແປງ

ເຈົ້າຂອງໂຄງການ ຕ້ອງຟື້ນຟູ ຫຼື ສ້ອມແປງສິ່ງອຳນວຍຄວາມສະດວກ ແລະ ສິ່ງຕ່າງໆ ອັນເປັນຊັບສົມບັດລວມຂອງຊຸມຊົນທີ່ໄດ້ຮັບຄວາມເສຍຫາຍຈາກໂຄງການ ໂດຍບໍ່ໃຫ້ເກັບຄ່າໃຊ້ຈ່າຍຈາກຊຸມຊົນ.

ການເຂົ້າໄປນຳໃຊ້ຊັບພະຍາກອນ ທີ່ເປັນກຳມະສິດລວມໝູ່ ຊຶ່ງຢູ່ພາຍໃນການຄຸ້ມຄອງຂອງຊຸມຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການຕ້ອງໄດ້ມີແຜນການຫຼຸດຜ່ອນຜົນກະທົບ ໃນດ້ານດັ່ງກ່າວ ໂດຍການຈັດສັນ ເພື່ອໃຫ້ເຂົາເຈົ້າສາມາດເຂົ້າໄປນຳໃຊ້ຊັບພະຍາກອນ ໄດ້ດີກວ່າເກົ່າ ຫຼື ຢ່າງໜ້ອຍກໍ່ໃຫ້ເທົ່າກັນກັບສະພາບການນຳໃຊ້ຜ່ານມາຂອງເຂົາເຈົ້າແບບຕໍ່ເນື່ອງ. ຕ້ອງໄດ້ໃຫ້ຄວາມເອົາໃຈໃສ່ ຕໍ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການໂດຍກົງ ຖ້າວ່າຜົນປະໂຫຍດຂອງເຂົາເຈົ້າໄດ້ຮັບຜົນກະທົບຍ້ອນບໍ່ສາມາດນຳໃຊ້ຊັບພະຍາກອນລວມດັ່ງກ່າວ.

(ດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ ເລກທີ192/ນຍ, ວັນທີ 7 ກໍລະກົດ 2005).

### 11 ພະຈິກ November — ພສ ໒໕໕໗ ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | | | | | | 1 ຂ.10 ດ.12 |
| 2 ຂ.11 ດ.12 | 3 ຂ.12 ດ.12 | 4 ຂ.13 ດ.12 | 5 ຂ.14 ດ.12 | 6 ຂ.15 ດ.12 | 7 ຮ.1 ດ.12 | 8 ຮ.2 ດ.12 |
| 9 ຮ.3 ດ.12 | 10 ຮ.4 ດ.12 | 11 ຮ.5 ດ.12 | 12 ຮ.6 ດ.12 | 13 ຮ.7 ດ.12 | 14 ຮ.8 ດ.12 | 15 ຮ.9 ດ.12 |
| 16 ຮ.10 ດ.12 | 17 ຮ.11 ດ.12 | 18 ຮ.12 ດ.12 | 19 ຮ.13 ດ.12 | 20 ຮ.14 ດ.12 | 21 ຮ.15 ດ.12 | 22 ຂ.1 ດ.1 |
| 23 ຂ.2 ດ.1 | 24 ຂ.3 ດ.1 | 25 ຂ.4 ດ.1 | 26 ຂ.5 ດ.1 | 27 ຂ.6 ດ.1 | 28 ຂ.7 ດ.1 | 29 ຂ.8 ດ.1 |
| 30 ຂ.9 ດ.1 | | | | | | |

6. ວັນບຸນນະມັດສະການພະທາດຫລວງວຽງຈັນ.

### 12 ທັນວາ December — ພສ ໒໕໕໗ ຄສ 2014

| ອາທິດ SUN | ຈັນ MON | ອັງຄານ TUE | ພຸດ WED | ພະຫັດ THU | ສຸກ FRI | ເສົາ SAT |
|---|---|---|---|---|---|---|
| | 1 ຂ.10 ດ.1 | 2 ຂ.11 ດ.1 | 3 ຂ.12 ດ.1 | 4 ຂ.13 ດ.1 | 5 ຂ.14 ດ.1 | 6 ຂ.15 ດ.1 |
| 7 ຮ.1 ດ.1 | 8 ຮ.2 ດ.1 | 9 ຮ.3 ດ.1 | 10 ຮ.4 ດ.1 | 11 ຮ.5 ດ.1 | 12 ຮ.6 ດ.1 | 13 ຮ.7 ດ.1 |
| 14 ຮ.8 ດ.1 | 15 ຮ.9 ດ.1 | 16 ຮ.10 ດ.1 | 17 ຮ.11 ດ.1 | 18 ຮ.12 ດ.1 | 19 ຮ.13 ດ.1 | 20 ຮ.14 ດ.1 |
| 21 ຂ.1 ດ.2 | 22 ຂ.2 ດ.2 | 23 ຂ.3 ດ.2 | 24 ຂ.4 ດ.2 | 25 ຂ.5 ດ.2 | 26 ຂ.6 ດ.2 | 27 ຂ.7 ດ.2 |
| 28 ຂ.8 ດ.2 | 29 ຂ.9 ດ.2 | 30 ຂ.10 ດ.2 | 31 ຂ.11 ດ.2 | | | |

2. ວັນສະຖາປະນາ ສ.ປ.ປ ລາວ.
13. ວັນຄ້າຍວັນເກີດ ທ່ານ ປະທານ ໄກສອນ ພົມວິຫານ.

MONRE, LIWG Land Issues Working Group, Village Focus International, CIDSE, JVC Japan International Volunteer Center, OXFAM, Mennonite Central Committee, welt hunger hilfe, World Renew, care, GAPE, CCL, LUX DEV Luxembourg Agency for Development Cooperation, Mekong Watch, HELVETAS Laos, PADETC, AFC Agro-Forestry Consultant, caritas Luxembourg, Swiss Agency for Development and Cooperation SDC, german cooperation, giz, European Union, British Embassy Vientiane, Ambassade de France au Laos